ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ ເລກທີ 98 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 08 ກຸມພາ 2022

# ໜັງສືແຈ້ງການ

**ເຖິງ**: ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ພະນັກງານ, ທະຫານ ແລະ ຕຳຫຼວດ, ຕະຫຼອດຮອດຜູ້ທີ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ.

**ເລື່ອງ**: ເພີ່ມທະວີຄວາມມີສະຕິລະວັງຕົວ ແລະ ປ້ອງກັນຄວາມສ່ຽງ ໃນການລົງທຶນໃນທຸລະກິດທີ່ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 7 ທັນວາ 2018;
- ອີງຕາມດຳລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012.

ໃນສະພາບການທີ່ມີການລະບາດຂອງພະຍາດໂຄວິດ-19 ຊຶ່ງໄດ້ມີຜົນກະທົບໃນວົງກວ້າງຕໍ່ກັບສະພາບເສດຖະກິດຂອງພາຍໃນ ແລະ ພາກພື້ນ, ຄວາມຫຍຸ້ງຍາກໃນການດຳເນີນທຸລະກິດ, ແບບແຜນການດຳລົງຊີວິດຂອງປະຊາຊົນລາວ ແມ່ນໄດ້ຮັບຜົນກະທົບໃນລະດັບທີ່ເຫັນໄດ້ຢ່າງຊັດເຈນໃນໄລຍະສອງປີຜ່ານມາຄືແຕ່ປີ 2019-2021.

ທະນາຄານແຫ່ງ ສປປ ລາວ ແມ່ນອົງກອນຄຸ້ມຄອງມະຫາພາກດ້ານເງິນຕາໃຫ້ມີສະຖຽນລະພາບ, ຄຸ້ມຄອງສະຖາບັນການເງິນໃຫ້ມີຄວາມໝັ້ນຄົງ ແລະ ຄຸ້ມຄອງລະບົບການຊຳລະໃຫ້ມີປະສິດທິພາບ, ຊຶ່ງເຮັດໜ້າທີ່ພິຈາລະນາຄົ້ນຄ້ວາອອກອະນຸຍາດ, ຄຸ້ມຄອງຄວາມໝັ້ນຄົງ ແລະ ຊຸກຍູ້ສົ່ງເສີມໃຫ້ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ການເຄື່ອນໄຫວທີ່ກ່ຽວຂ້ອງ ໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ສະໜອງການບໍລິການທີ່ມີຄຸນນະພາບ, ມີຄວາມໂປ່ງໃສ ແລະ ໃຫ້ບໍລິການຢ່າງທົ່ວເຖິງ.

ໃນສະພາບການທີ່ ເຕັມໄປດ້ວຍກາລະໂອກາດ ແລະ ສິ່ງທ້າທາຍ ໃນການເຮັດທຸລະກິດທາງດ້ານການເງິນນີ້ ຍັງມີການເຄື່ອນໄຫວໃຫ້ບໍລິການທາງດ້ານການເງິນທີ່ບໍ່ໄດ້ຮັບອະນຸຍາດ, ມີຄວາມສ່ຽງສູງ ແລະ ບໍ່ສອດຄ່ອງຕາມ



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ກົດໝາຍ ຍັງບໍ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງຂອງລັດ ໂດຍສະເພາະບັນດາຫົວໜ່ວຍທຸລະກິດຮ້ານຂາຍຄຳຈຳນວນໜຶ່ງໄດ້ໃຫ້ບໍລິການໃນຮູບແບບລະດົມທຶນ, ຮັບຝາກເງິນ, ອອມຄຳ ຫຼື ການຊື້ຄຳຍ່ອຍ ຊຶ່ງໄດ້ມີການໂຄສະນາຜ່ານສື່ ແລະ ຊ່ອງທາງອອນລາຍຕ່າງໆ ໂດຍກ່າວອ້າງວ່າໃຫ້ຜົນຕອບແທນສູງ, ມີຄວາມປອດໄພ ແລະ ໂປ່ງໃສ.

ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງການມາຍັງພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ ແລະ ທະຫານຕຳຫຼວດ ຕະຫຼອດຮອດຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ຈົ່ງມີສະຕິຕໍ່ການໂຄສະນາເກີນຄວາມເປັນຈິງທີ່ຊັກຊວນລົງທຶນທີ່ໃຫ້ຜົນຕອບແທນສູງ ເປັນຕົ້ນ ການຊື້ວັດຖຸມີຄ່າປະເພດຄຳ, ເງິນ, ເພັດ, ພອຍ, ວັດຖຸໂບຮານ ຫຼື ສິ່ງທີ່ມີມູນຄ່າສູງຂອງບຸກຄົນ, ກຸ່ມຄົນ, ນິຕິບຸກຄົນ ຫຼື ອົງກອນ. ພ້ອມນັ້ນ ກໍໃຫ້ເພີ່ມການຊອກຮູ້ຂໍ້ມູນຂ່າວສານ ທີ່ຮອບຄອບ, ພຽງພໍໃຫ້ແກ່ການຕັດສິນໃຈຂອງຕົນກ່ອນການລົງທຶນໃນໂຄງການໃດໜຶ່ງ, ຮູບແບບການລົງທຶນໃດໜຶ່ງເພື່ອຫຼີກລ້ຽງຄວາມສ່ຽງຕໍ່ຊັບສິນ ແລະ ທຶນຮອນຂອງພໍ່ແມ່ປະຊາຊົນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດ, ພະນັກງານ, ທະຫານ ແລະ ຕຳຫຼວດ, ຕະຫຼອດຮອດຜູ້ທີ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດຊາບ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

**ເພັດສະກາພອນ ແກ້ວວົງວິຈິດ**